# ເອກະສານຊ້ອນທ້າຍ 02

## ການຈົດທະບຽນພາຫະນະທີ່ໃຊ້ໃນການຂົນສົ່ງລະຫວ່າງປະເທດ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ເອກະສານຊ້ອນທ້າຍ");**

ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະ ໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງ ລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອໍານວຍຄວາມ ສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທໍາອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຢາງກຸ້ງ, ເຊິ່ງລາຊະອານາຈັກ ກໍາປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຢາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງຕາລີ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ຂ) ແລະ (ບ) ຂອງສັນຍາ ຊຶ່ງມີຜົນຕໍ່ເອກະສານຊ້ອນທ້າຍ ແລະ ອະນຸສັນ ຍາ ຕ້ອງກໍານົດລາຍລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຖືເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈໍາແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ 6 ປະເທດ ຄັ້ງທີ 9 ທີ່ມະນິລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ຄັ້ງ 7 ທີ່ ໂຮຈິມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນໍ້າຂອງ 6 ປະເທດ

ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສຳເລັດໃນປີ 2005; ແລະ

ອີງຕາມມາດຕາ 03 (ຓ) ແລະ 12 ຂອງສັນຍາສະບັບນີ້ ຊຶ່ງກຳນົດໃຫ້ມີເອກະສານຊ້ອນທ້າຍນີ້ ເພື່ອກຳນົດລາຍລະອຽດທາງດ້ານເຕັກນິກ.

## ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:

### ມາດຕາ 01: ປະເພດຂອງພາຫະນະ.

ຍານພາຫະນະ ແມ່ນພາຫະນະທີ່ໃຊ້ພະລັງງານຂັບເຄື່ອນ ຊຶ່ງປົກກະຕິແມ່ນໃຊ້ຂົນສົ່ງຄົນ ຫຼື ສິນຄ້າ ທາງບົກລວມເຖິງພາຫະນະຄັນດ່ຽວ/rigid motor vehicles, ພາຫະນະທີ່ມີການພວງ/articulated vehi- cles (ພາຫະນະທີ່ລາກຈູງພາຫະນະພວງຕໍ່) ແລະ ພາຫະນະພວງຕໍ່/semi-trailers (ພາຫະນະທີ່ຖືກລາກ ໂດຍຍານພາຫະນະອີກຄັນໜຶ່ງ ໂດຍສ່ວນໜຶ່ງຂອງພາຫະນະຖືກວາງຊ້ອນເທິງຍານພາຫະນະຄັນທີ່ລາກ ແລະ ນ້ຳໜັກສ່ວນໃຫຍ່ຂອງພາຫະນະ ແລະ ນ້ຳໜັກບັນທຸກຖືກຮອງຮັບໂດຍຍານພາຫະນະຄັນທີ່ລາກນັ້ນ) ແຕ່ບໍ່ລວມພາຫະນະທີ່ໃຊ້ສຳລັບການຂົນສົ່ງຜູ້ໂດຍສານ ຫຼື ສິນຄ້າທາງບົກ ຫຼື ເພື່ອລາກພາຫະນະທີ່ໃຊ້ສຳ ລັບການຂົນສົ່ງຄົນ ຫຼື ສິນຄ້າ ໂດຍບໍ່ມີຈຸດປະສົງເຊັ່ນ: ລົດດຸດ (ລົດແທກເຕີ) ເພື່ອການກະສິກຳ ຫຼື ເຄື່ອງມື ໃນການສ້າງເສັ້ນທາງ ແລະ ບໍ່ລວມເຖິງພາຫະນະຂົນສົ່ງທາງ ລົດໄຟ, ລົດຈັກຂະໜາດນ້ອຍ ແລະ ລົດຈັກ. ຮູບພາບຂອງຍານພາຫະນະຕາມເອກະສານຊ້ອນທ້າຍນີ້ຈະຢູ່ໃນເອກະສານຄັດຕິດມານີ້.

### ມາດຕາ 02: ຂໍ້ບັງຄັບໃນການຈົດທະບຽນ.

ຍານພາຫະນະ ແລະ ພາຫະນະພວງຕໍ່ທີ່ໃຊ້ໃນການຂົນສົ່ງຂ້າມແດນ ຈະຕ້ອງຈົດທະບຽນໃນດິນ ແດນຂອງປະເທດຜູ້ສົ່ງ ໂດຍສອດຄ່ອງກັບລະບຽບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍນີ້.

### ມາດຕາ 03: ການໃຊ້ພາສາ ແລະ ຕົວອັກສອນ.

ລາຍການທີ່ໄດ້ລະບຸໃນເຄື່ອງໝາຍສະເພາະຂອງພາຫະນະ, ໜັງສືຮັບຮອງການຈົດທະບຽນພາຫະ ນະ ແລະ ແຜ່ນປ້າຍທະບຽນພາຫະນະ ຈະຕ້ອງເປັນພາສາອັງກິດ (ຕົວອັກສອນພິມໃຫຍ່ ແລະ/ຫຼື ຕົວອັກ ສອນພິມນ້ອຍ) ແລະ ຕົວເລກອາລະບິກ. ການໃຊ້ພາສາອັງກິດ ແລະ ເລກອາລະບິກດັ່ງກ່າວບໍ່ເປັນການ ຫ້າມທີ່ຈະໃຊ້ພາສາປະຈຳຊາດ ແລະ ອັກສອນປະຈຳຊາດຄວບຄູ່ກັນໄປ.

### ມາດຕາ 04: ເຄື່ອງໝາຍສະເພາະ.

ກ. ຍານພາຫະນະທຸກຄັນທີ່ໃຊ້ໃນການຂົນສົ່ງລະຫວ່າງປະເທດ ຈະຕ້ອງຕິດເຄື່ອງໝາຍສະເພາະ ດັ່ງຕໍ່ໄປນີ້:

1. ຊື່ ຫຼື ເຄື່ອງໝາຍການຄ້າຂອງບໍລິສັດຜູ້ຜະລິດຍານພາຫະນະ;
2. ໝາຍເລກຜະລິດຂອງບໍລິສັດຜູ້ຜະລິດ ຫຼື ເລກທີຄັນຊີ ຫຼື ກໍລະນີບໍ່ມີຄັນຊີເທິງຕົວຖັງ; ແລະ
3. ໝາຍເລກຈັກຕ້ອງຕິດຢູ່ເຄື່ອງຈັກ, ຖ້າໝາຍເລກດັ່ງກ່າວຖືກຕິດໂດຍຜູ້ຜະລິດເຄື່ອງຈັກດັ່ງ ກ່າວ (ບໍ່ໃຊ້ກັບພາຫະນະທີ່ມີການພວງ ຫຼື ພາຫະນະພວງຕໍ່).

ຂ. ເຄື່ອງໝາຍສະເພາະເຫຼົ່ານີ້ ຈະຕ້ອງຖືກວາງໃນຕຳແໜ່ງທີ່ເບິ່ງເຫັນໄດ້ ແລະ ງ່າຍແກ່ການອ່ານ. ນອກຈາກນັ້ນ, ເຄື່ອງໝາຍດັ່ງກ່າວຈະຕ້ອງບໍ່ສາມາດປ່ຽນແປງ ຫຼື ລຶບອອກໄດ້ງ່າຍ.

## ມາດຕາ 05: ໜັງສືຮັບຮອງການຈົດທະບຽນ.

ກ. ຍານພາຫະນະທຸກຄັນທີ່ໃຊ້ໃນການຂົນສົ່ງລະຫວ່າງປະເທດຈະຕ້ອງມີໜັງສືຮັບຮອງການຈົດທະ ບຽນທີ່ຍັງບໍ່ໝົດອາຍຸ ຊຶ່ງອອກໃຫ້ໂດຍເຈົ້າໜ້າທີ່ຜູ້ທີ່ມີອຳນາດຂອງປະເທດຕົ້ນທາງ (Home Country).

ຂ. ໃບຮັບຮອງການຈົດທະບຽນຈະຕ້ອງມີລາຍລະອຽດ ດັ່ງຕໍ່ໄປນີ້:

1. ຂໍ້ມູນທົ່ວໄປ.

1.1. ຫົວຂໍ້: ໜັງສືຮັບຮອງການຈົດທະບຽນພາຫະນະ.
1.2. ຊື່ (ແລະເຄື່ອງໝາຍ) ຂອງໜ່ວຍງານທີ່ອອກໃຫ້.
1.3. ທີ່ຢູ່ ແລະ ບ່ອນຕິດຕໍ່ຂອງໜ່ວຍງານທີ່ອອກໃບຮັບຮອງ.
1.4. ປະເທດ (ແລະ ເຄື່ອງໝາຍສະແດງປະເທດ) ຂອງໜ່ວຍງານທີ່ອອກໜັງສືຮັບຮອງ.
1.5. ຫຼັກຖານທີ່ສະແດງວ່າເປັນໜັງສືຮັບຮອງສະບັບແທ້ (ກາປະທັບ, ລາຍເຊັນ).
1.6. ວັນທີອອກໜັງສືຮັບຮອງ.

2. ເນື້ອໃນສຳຄັນຂອງການຈົດທະບຽນ.

2.1. ແຜ່ນປ້າຍທະບຽນ ຫຼື ໝາຍເລກທະບຽນ.
2.2. ເຄື່ອງໝາຍສະແດງປະເທດທີ່ຈົດທະບຽນ.
2.3. ວັນທີຈົດທະບຽນຄັ້ງທຳອິດ.
2.4. ໄລຍະເວລາຂອງໜັງສືຮັບຮອງ ຖ້າມີການກຳນົດ.

3. ລາຍລະອຽດຂອງເຈົ້າຂອງ ຫຼື ຜູ້ຖືໜັງສືຮັບຮອງ.

3.1. ຊື່ເຕັມ.
3.2. ທີ່ຢູ່.

4. ເນື້ອໃນສຳຄັນຂອງພາຫະນະ.

4.1. ປະເພດເຊັ່ນ: ລົດບັນທຸກ, ລົດໂດຍສານ, ລົດທົ່ວໄປ ແລະ ອື່ນໆ.

4.2. ຕົວຖັງ.

4.2.1. ຍີ່ຫໍ້/ເຄື່ອງໝາຍທາງການຄ້າ.

4.2.2. ລຸ້ນ/ລະຫັດ (ຖ້າມີ).

4.2.3. ສີ (RAL code).

4.2.4. ປີຜະລິດ (ຖ້າມີ).

4.2.5. ໝາຍເລກຄັນຊີ.

4.2.6. ຈຳນວນເພົາ.

4.2.7. ນ້ຳໜັກເປົ່າ (ນ້ຳໜັກພາຫະນະທີ່ບໍ່ລວມນ້ຳໜັກສິນຄ້າ ຫຼື ຜູ້ໂດຍສານ) (ລົດ ບັນທຸກ ແລະ ລົດໂດຍສານ) (ການລະບຸຂໍ້ມູນຂ້າງຕົວຖັງຂອງລົດບັນທຸກ ຫຼື ລົດໂດຍສານນັ້ນ ແມ່ນບໍ່ບັງຄັບ).

4.2.8. ນ້ຳໜັກລວມ (ລົດບັນທຸກ) ຫຼື ຈຳນວນທີ່ນັ່ງ (ລົດໂດຍສານ) (ການລະບຸຂໍ້ມູນ ຂ້າງຕົວຖັງຂອງລົດບັນທຸກ ແລະ ລົດໂດຍສານນັ້ນ ແມ່ນບໍ່ບັງຄັບ).

4.3. ເຄື່ອງຈັກ.

4.3.1. ຍີ່ຫໍ້ (ຖ້າຕ່າງຈາກຕົວຖັງ).

4.3.2. ຈຳນວນລູກສູບ.

4.3.3. ຈຳນວນຊີຊີ.

4.3.4. ແຮງມ້າ.

4.3.5. ໝາຍເລກເຄື່ອງຈັກ.

## ມາດຕາ 06: ແຜ່ນປ້າຍທະບຽນ.

ຍານພາຫະນະທຸກຄັນທີ່ໃຊ້ໃນການຂົນສົ່ງລະຫວ່າງປະເທດ ຈະຕ້ອງສະແດງໝາຍເລກທະບຽນພາ ຫະນະເທິງແຜ່ນປ້າຍພິເສດລຽບແນວຕັ້ງທີ່ຕິດດ້ານໜ້າ ແລະ ດ້ານຫຼັງຂອງພາຫະນະທີ່ມູນຂວາຂອງກາງ ພາຫະນະ, ສາມາດອ່ານໄດ້ໃນໄລຍະ 35-40 ແມັດ, ພື້ນຜິວຂອງແຜ່ນປ້າຍອາດເປັນວັດສະດຸສະທ້ອນ ແສງ. ພາຫະນະທີ່ມີພວງ ຈະຕ້ອງສະແດງໝາຍເລກທະບຽນຢ່າງໜ້ອຍທີ່ດ້ານຫຼັງ.

## ມາດຕາ 07: ເຄື່ອງໝາຍສະແດງປະເທດ.

ກ. ຍານພາຫະນະທຸກຄັນທີ່ໃຊ້ໃນການຂົນສົ່ງລະຫວ່າງປະເທດ ຈະຕ້ອງສະແດງເຄື່ອງໝາຍສະ ແດງປະເທດທີ່ໄດ້ຂຶ້ນທະບຽນທີ່ດ້ານຫຼັງ. ນອກເໜືອຈາກໝາຍເລກທະບຽນພາຫະນະ, ເຄື່ອງໝາຍສະ ເພາະຈະຕ້ອງປະກອບດ້ວຍຕົວອັກສອນ 1-3 ຕົວ ທີ່ເປັນຕົວອັກສອນລາຕິນຕົວພິມໃຫຍ່ສູງຢ່າງນ້ອຍ 0.08 ແມັດ ແລະ ກວ້າງຢ່າງນ້ອຍ 0.01 ແມັດ, ຕົວອັກສອນຕ້ອງເປັນສີດຳເທິງພື້ນຂາວທີ່ມີລັກສະນະຂອງວົງໄຂ່ ຕາມແນວນອນ.

ຂ. ເຄື່ອງໝາຍສະແດງປະເທດ ຈະຕ້ອງບໍ່ລວມກັບໝາຍເລກທະບຽນ ຫຼື ຕິດໃນທາງໃດທາງໜຶ່ງທີ່ກໍ່ ໃຫ້ເກີດການສັບສົນກັບໝາຍເລກ ຫຼື ບັງການເບິ່ງເຫັນ.

ຄ. ວິທີການຕິດເຄື່ອງໝາຍປະເທດໃຫ້ເປັນໄປຕາມລະບຽບການກ່ຽວກັບໝາຍເລກທະບຽນພາຫະ ນະ.

ງ. ເຄື່ອງໝາຍສະແດງປະເທດທີ່ຈົດທະບຽນຍານພາຫະນະຂອງແຕ່ລະລັດພາຄີ ມີດັ່ງນີ້:

- ກຳປູເຈຍ: KH.
- ຈີນ: CHN
- ລາວ: LAO
- ມຽນມາ: MYA
- ໄທ: T
- ຫວຽດນາມ: VN

ມາດຕາ 08: ການຍອມຮັບຊຶ່ງກັນ ແລະ ກັນ.

ລັດພາຄີແຕ່ລະປະເທດຈະຍອມຮັບແຜ່ນປ້າຍທະບຽນພາຫະນະ, ໜັງສືຮັບຮອງການຈົດທະບຽນພາ ຫະນະ ແລະ ໜັງສືຮັບຮອງການກວດກາສະພາບພາຫະນະ ແລະ/ຫຼື ເຄື່ອງໝາຍການກວດກາສະພາບທີ່ ອອກໃຫ້ໂດຍໜ່ວຍງານທີ່ມີອຳນາດຂອງລັດພາຄີອື່ນ.

**ມາດຕາ 09: ການດັດແກ້.**

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ເອກະສານຊ້ອນທ້າຍໄດ້ ໂດຍຜ່ານຄະນະກຳມະ ການຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

**ມາດຕາ 10: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.**

ເອກະສານຊ້ອນທ້າຍ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດ ພາຄີ. ມາດຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 11: ຜົນບັງຄັບໃຊ້.

ເອກະສານຊ້ອນທ້າຍ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 12: ການປັບປຸງກົດໝາຍພາຍໃນປະເທດ.

ໃນກໍລະນີທີ່ຈຳເປັນ, ລັດພາຄີ ຕ້ອງໄດ້ດຳເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບເນື້ອໃນເອກະສານຊ້ອນທ້າຍ.

## ມາດຕາ 13: ຂໍ້ສະຫງວນ.

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ເອກະສານຊ້ອນທ້າຍນີ້.

## ມາດຕາ 14: ການຢຸດຕິການນຳໃຊ້ເອກະສານຊ້ອນທ້າຍ.

ລັດພາຄີແຕ່ລະປະເທດ ອາດຈະຢຸດຕິການນຳໃຊ້ເອກະສານຊ້ອນທ້າຍຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງ ແຈ້ງຕໍ່ລັດພາຄີອື່ນຮັບຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນຳໃຊ້ເອກະສານຊ້ອນທ້າຍ ແລະ ຈະສິ້ນສຸດ ລົງທັນທີທີ່ເຫດການກັບສູ່ສະພາວະປົກກະຕິ.

## ມາດຕາ 15: ການພົວພັນກັບສັນຍາ.

ໃນຖານະທີ່ເປັນມາດຕະການໃນການດຳເນີນການຕາມຫຼັກການທີ່ກຳນົດໄວ້ໃນສັນຍາ, ເອກະສານ ຊ້ອນທ້າຍຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍນີ້ກັບເອກະສານຊ້ອນທ້າຍອື່ນ ຫຼື ອະນຸສັນຍາ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

## ມາດຕາ 16: ການພົວພັນຂອງເອກະສານຄັດຕິດກັບເອກະສານຊ້ອນທ້າຍ.

ເອກະສານຄັດຕິດ ຖືເປັນສ່ວນໜຶ່ງຂອງເອກະສານຊ້ອນທ້າຍ ແລະ ມີຜົນສັດສິດເທົ່າທຽມກັນ.

## ມາດຕາ 17: ການແກ້ໄຂຂໍ້ຂັດແຍ່ງ.

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ເອກະສານຊ້ອນທ້າຍສະບັບນີ້ ລະຫວ່າງ ລັດພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະ ກຳມະການຮ່ວມກັນ.

## ມາດຕາ 18: ການຍົກເລີກ.

ເມື່ອເອກະສານຊ້ອນທ້າຍມີຜົນບັງຄັບໃຊ້ແລ້ວ, ເອກະສານຊ້ອນທ້າຍບໍ່ສາມາດຖືກຍົກເລີກແຍກ ຕ່າງຫາກ ຈາກສັນຍາໄດ້.

ເອກະສານຄັດຕິດ: ຮູບພາບພາຫະນະ.

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນ ເອກະສານຊ້ອນທ້າຍນີ້.

ລົງນາມທີ່ ພະນົມເປນ, ວັນທີ 30 ເມສາ 2004 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈານວນ 06 ສະບັບ.

ລົງນາມ ໂດຍ:

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ

ພະນະທ່ານ Tram Iv Tek
ລັດຖະມົນຕີວ່າການກະຊວງໂຍທາທິການ ແລະ ຂົນສົ່ງ
ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Hu Xijie

ລັດຖະມົນຕີຊ່ວຍວ່າການກະຊວງສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມມາດ ພົນເສນາ
ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Thura Thaung Lwin
ລັດຖະມົນຕີຊ່ວຍວ່າການກະຊວງຂົນສົ່ງທາງລົດໄຟ
ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Nikonr Chamnong
ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Pham The Minh
ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

## ເອກະສານຄັດຕິດ: ການສະແດງຮູບພາບພາຫະນະ.



**ພາຫະນະນັ່ງສ່ວນບຸກຄົນ**

ນ້ຳໜັກລວມຂອງລົດສູງສຸດ 3,500 ກິໂລກຼາມ

ຈຳນວນທີ່ນັ່ງຄົນໂດຍສານບໍ່ເກີນ 8 ຄົນ (ບໍ່ລວມຄົນຂັບ)



**ພາຫະນະໂດຍສານ (ລົດ ບາສ)**

ຈຳນວນທີ່ນັ່ງຄົນໂດຍສານເກີນ 8 ຄົນ (ບໍ່ລວມຄົຍຂັບ)



**ພາຫະນະບັນທຸກດຽວ**

ນ້ຳໜັກລວມຂອງລົດເກີນກວ່າ 3,500 ກິໂລກຼາມ

**ພາຫະນະພວງ**

ພາຫະນະຫົວລາກ+ພາຫະນະພວງຕໍ່

**ໝາຍເຫດ:** ອີງຕາມນ້ຳໜັກທີ່ກ່າວມາຂ້າງເທິງນັ້ນ ໃຊ້ເພື່ອຈຸດປະສົງຂອງການແບ່ງປະເພດພາຫະນະເທົ່ານັ້ນ.